ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຝຶກອົບຮົມຫົວຂໍ້: "ການຄຸ້ມຄອງບໍລິຫານຂອງທະນາຄານທຸລະກິດ, ການເປີດເຜີຍຂໍ້ມູນ ແລະ ການຫັກເງິນແຮ"





ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຝຶກອົບຮົມຫົວຂໍ້: "ການຄຸ້ມຄອງບໍລິຫານຂອງທະນາຄານທຸລະກິດ, ການເປີດເຜີຍຂໍ້ມູນ ແລະ ການຫັກເງິນແຮ" ໃນລະຫວ່າງວັນທີ 04-05 ມິຖຸນາ 2019 ທີ່ຫ້ອງປະຊຸມ ທຫລ ນະຄອນຫຼວງວຽງຈັນ, ໂດຍການເຂົ້າຮ່ວມຂອງທ່ານນາງ ໂພທິຈັນ ທຳມະເທວາ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ (ທຫລ), ນັກວິທະຍາກອນຜູ້ຊ່ຽວຊານຈາກທະນາຄານອາຊີ (ADB) ພ້ອມນີ້ກໍ່ມີບັນດາພາກສ່ວນທີ່ມາຈາກກົມວິຊາການພາຍໃນ ທຫລ ເຂົ້າຮ່ວມຈຳນວນ 38 ທ່ານ.

ການຝຶກອົບຮົມຄັ້ງນີ້, ອີງຕາມແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ ຂອງ ສປປ ລາວ 2016-2025 ແລະ ວິໄສທັດຮອດປີ 2030, ແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດ ການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ແຕ່ປີ 2017-2025 ໄດ້ກຳນົດໃຫ້ມີການຈັດຕັ້ງປະຕິບັດຫຼັກການ BCPs ແລະ ນຳໃຊ້ BASEL II ແລະ ບາງສ່ວນຂອງ BASEL III ພາຍໃນປີ 2025 ແລະ ຄວາມຈຳເປັນໃນການເຊື່ອມໂຍງຂະແໜງການທະນາຄານໃນພາກພື້ນອາຊຽນ (ABIF) ຂອງ ສປປ ລາວ. ການຈັດຝຶກອົບຮົມດັ່ງກ່າວຈະເປັນປະໂຫຍດຢ່າງຍິ່ງໃຫ້ແກ່ບັນດາທ່ານ ເພື່ອນຳໃຊ້ເຂົ້າໃນວຽກງານຕົວຈິງ ໂດຍສະເພາະແມ່ນວຽກງານການຄຸ້ມຄອງຄວາມໝັ້ນຄົງຂອງລະບົບທະນາຄານທຸລະກິດໃນ ສປປ ລາວ ແລະ ປະຈຸບັນ ທຫລ ກໍກຳລັງມີການຄົ້ນຄວ້າສ້າງນິຕິກຳກ່ຽວກັບ ການຄຸ້ມຄອງບໍລິຫານອົງກອນ, ການເປີດເຜີຍຂໍ້ມູນຂອງທະນາຄານທຸລະກິດ ແລະ ລະບຽບການອື່ນໆ ໂດຍຈະໄດ້ອີງໃສ່ບົດຮຽນ ແລະ ວິທີປະຕິບັດທີ່ດີຂອງສາກົນ ແລະ ດັດປັບໃຫ້ສອດຄ່ອງກັບສະພາບຂອງເງື່ອນໄຂລະບົບທະນາຄານໃນ ສປປ ລາວ.

+ ຂ່າວ-ພາບ: ທ ສົມພິດ ທຳມະວົງ

# ຂໍ້ມູນອ້າງອີງຈາກ: ກົມຄຸ້ມຄອງທະນາຄານທຸລະກິດ.

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**